ສຳນັກງານ ຄຄຊ
ເລກທີ...0591
ວັນທີ...20 JUN 2019
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 25 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 19 ມິຖຸນາ 2019

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 03-07/06/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,95% ເມື່ອທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດ ສ. ອາເມຣິກາອອກມາບໍ່ດີ ເຫັນໄດ້ຈາກຕົວເລກຍອດສັ່ງຊື້ຂອງໂຮງງານໃນເດືອນ 4/2019 ຫຼຸດລົງຢູ່ລະດັບ 1,00% ຈາກເພີ່ມຂຶ້ນຮອດລະດັບ 1,90% ໃນເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດ ເພີ່ມຂຶ້ນ ຈາກຈຳນວນ 215.000 ຄົນ ມາເປັນ 218.000 ຄົນໃນອາທິດທີ 31/05/2019.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 27-31/05/2019 | ອາທິດນີ້ 03-07/06/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1153 | 1,1260 | -0,95% |
| ເຢນ/ໂດລາ | 108,76 | 108,59 | 0,16% |
| ບາດ/ໂດລາ | 31,620 | 31,370 | 0,80% |
| ເປໂຊ/ໂດລາ | 52,20 | 52,05 | 0,30% |
| ຣູເປັຍ/ໂດລາ | 14.280,00 | 14.280,00 | 0,00% |
| ໂດລາສິງກະໂປ/ໂດລາ | 1,3779 | 1,3675 | 0,76% |
| ຢວນ/ໂດລາ | 6,9039 | 6,9137 | -0,14% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 3,47% ເປັນ 53,37 ໂດລາ/ບາເຣວ ເນື່ອງຈາກການສະໜອງນ້ຳມັນຫຼາຍກວ່າຄວາມຕ້ອງການໃຊ້ນ້ຳມັນ ເຫັນໄດ້ຈາກຄັງສຳຮອງນ້ຳມັນດິບຂອງ ສ. ອາເມລິກາ ເພີ່ມຂຶ້ນ 6,77 ລ້ານບາເຣວໃນອາທິດທີ 31/05/2019 ຈາກຫຼຸດລົງ 0,28 ລ້ານບາເຣວ ໃນອາທິດຜ່ານມາ. ພ້ອມກັນນັ້ນ, ກຳລັງການຜະລິດນ້ຳມັນດິບຂອງ ສ. ອາເມລິກາ ໄດ້ປັບເພີ່ມຂຶ້ນ 100.000 ບາເຣວ/ວັນ ສູ່ລະດັບ 12,40 ລ້ານບາເຣວ/ວັນ ;

- ລາຄາຄຳ ເພີ່ມຂຶ້ນ 2,74% ເປັນ 1.333,60 ໂດລາ/ອອນ ເນື່ອງຈາກເງິນໂດລາອ່ອນຄ່າລົງ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,26% ແຕ່ອ່ອນຄ່າລົງ 0,91% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,24% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,71% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 27-31/05/2019 | | | ອາທິດນີ້ 03-07/06/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.731,74 | 8.760,32 | 8.745,89 | 8.710,80 | 8.735,70 | 8.723,02 | 0,24% | 0,28% | 0,26% | -1,25% | -1,24% | -1,24% |
| ບາດ | 276,17 | 278,26 | 277,66 | 278,71 | 280,96 | 280,21 | -0,91% | -0,96% | -0,91% | -4,49% | -4,80% | -4,71% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,18% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 16,50%;

- ປະລິມານເງິນ M2 ເພີ່ມຂຶ້ນ 0,26% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,35%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (31/05-06/06/2019) ເຫັນວ່າ: ທະນາຄານທຸລະກິດ (ທທກ) ຂາຍເງິນໂດລາສຸດທິ 1,39 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 20,48 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 21,87 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 117,61 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 177,84 ລ້ານບາດ ແລະ ຂາຍເງິນບາດໄດ້ 295,45 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດ ເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 48,32% ແລະ ເງິນບາດຫຼຸດລົງ 36,65%;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດູດຊຶມໂດຍການຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 2,50 ລ້ານໂດລາ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 1,54 ລ້ານໂດລາ ແລະ ເງິນບາດ ຈຳນວນ 38,21 ລ້ານບາດ;

---

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ທຫລ ມີການຂາຍເງິນສຸດທິຈຳນວນ 5,00 ລ້ານໂດລາ.

**ສະພາບການຊື້-ຂາຍເງິນຕາຕ່າງປະເທດ** (ຫົວໜ່ວຍ: ລ້ານ)

| | ອາທິດກ່ອນ 31/05-06/06/2019 | | ອາທິດນີ້ 03-07/06/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **37,51** | **140,11** | **20,48** | **177,84** | **-58,43%** | **44,44%** |
| - ທ/ຄທຸລະກິດລັດ | 17,17 | 75,64 | 10,58 | 57,08 | -53,88% | 94,15% |
| - ທ/ຄທຸລະກິດອື່ນໆ | 20,34 | 64,47 | 9,90 | 120,76 | -62,40% | 28,85% |
| **2. ການຂາຍເງິນຕາຕ່າງປະເທດ** | **40,06** | **551,04** | **21,87** | **295,45** | **-33,08%** | **-52,65%** |
| - ທ/ຄທຸລະກິດລັດ | 9,75 | 278,12 | 9,81 | 125,51 | -18,99% | -65,75% |
| - ທ/ຄທຸລະກິດອື່ນໆ | 30,31 | 272,92 | 12,06 | 169,94 | -41,37% | -34,00% |
| **ຊື້-ຂາຍສຸດທິ ທທກ** | **-2,55** | **-410,93** | **-1,39** | **-117,61** | **-108,38%** | **-76,52%** |
| - ຜົດດ່ຽງຊື້-ຂາຍ | -6,80% | -293,29% | -6,79% | -66,13% | -120,16% | -83,74% |
| **- ມູນຄ່າການຊື້-ຂາຍ** | **77,57** | **691,15** | 42,35 | 473,29 | -48,32% | -36,65% |
| **3. ການຊື້-ຂາຍລະຫວ່າງ ທຫລກັບ ທທກ** | **-1,83** | **-40,10** | **-2,50** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 1,83 | 40,10 | 2,50 | 0,00 | | |
| **4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **1,45** | **29,38** | **1,54** | **38,21** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **-5,00** | **0,00** | **-5,00** | **0,00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 5,00 | 0,00 | 5,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 06/2019 ຄາດວ່າຈະຢູ່ໃນລະດັບ 2,84%.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼເຂົ້າສຸດທິ ຜ່ານລະບົບທະນາຄານ ຈຳນວນ 11,09 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (31/05-06/06/2019) ກະແສເງິນໄຫຼເຂົ້າມີຈຳນວນ 129,34 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຊຳລະຄ່າສິນຄ້າ ແລະ ບໍລິການຈຳນວນ 64,63 ລ້ານໂດລາສະຫະລັດ ແລະ ຮັບເງິນກູ້ຢືມ ຈຳນວນ 49,44 ລ້ານໂດລາສະຫະລັດ). ສ່ວນກະແສເງິນໄຫຼເຂົ້າມີ ຈຳນວນ 118,25 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່າສິນຄ້າ ແລະ ບໍລິການຈຳນວນ 82,35 ລ້ານໂດລາສະຫະລັດ, ລາຍຈ່າຍອື່ນໆ ຈຳນວນ 18,75 ລ້ານໂດລາ ແລະ ລັດຖະບານຊຳລະຕົ້ນທຶນເງິນກູ້ຢືມຈາກຕ່າງປະເທດ ຈຳນວນ 15,48 ລ້ານໂດລາ).

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 532 ສະບັບທຽບໃສ່ອາທິດຜ່ານມາ ຫຼຸດລົງ 46 ສະບັບ, ລວມມູນຄ່າໂອນທັງໝົດ 338,94 ຕື້ກີບ, ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 2,61 ຕື້ກີບເທົ່າກັບ 0,77%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (03-07/06/2019) ແມ່ນຍັງບໍ່ສາມາດເກັບກຳຂໍ້ມູນໄດ້ເນື່ອງຈາກຢູ່ໃນໄລຍະຖ່າຍໂອນຄວາມຮັບຜິດຊອບການເກັບກຳຂໍ້ມູນ.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 815,21ຈຸດ ຫຼຸດລົງ ຈາກ 815,76 ຈຸດ ຫຼື ເທົ່າກັບ 0,07% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 158.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 692,63 ລ້ານກີບ ຫຼຸດລົງ 81,23% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ 72,57% ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ LAT ແລະ PTL.

**<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>**

| ບໍລິສັດ | ອາທິດກ່ອນ (24-30/05/2019) | | | ອາທິດນີ້ (31/05-06/06/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| BCEL | 262.100 | 1.574.600.000 | 6.200 | 53.000 | 327.895.000 | 6.200 | -79,78 | -79,18 | - |
| EDL-GEN | 473.000 | 1.864.685.000 | 3.940 | 83.100 | 328.245.000 | 3.950 | -82,43 | -82,40 | 0,25 |
| LWPC | - | - | 7.150 | - | - | 7.150 | - | - | - |
| PTL | - | - | 1.000 | 300 | 285.000 | 950 | - | - | -5,00 |
| SVN | 300 | 605.000 | 2.000 | 100 | 200.000 | 2.000 | -66,67 | -66,94 | - |
| PCD | - | - | 1.010 | - | - | 1.010 | - | - | - |
| LCC | 15.800 | 33.970.000 | 2.150 | 600 | 1.291.000 | 2.160 | -96,20 | -96,20 | 0,47 |
| MHTL | 72.300 | 215.522.000 | 3.000 | 5.300 | 15.510.000 | 3.000 | -92,67 | -92,80 | - |
| LAT | - | - | 800 | 1.500 | 1.125.000 | 750 | - | - | -6,25 |
| VCL | - | - | - | 14.900 | 18.080.000 | 1.250 | - | - | - |
| ທັງໝົດ | 823.5000 | 3.689.382.000 | | 158.800 | 692.631.000 | | -80,72 | -81,23 | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- **ທຫລ** ໄດ້ຮ່ວມກອງປະຊຸມ ແລະ ປຶກສາຫາລືວຽກງານທີ່ຈຳເປັນຈຳນວນໜຶ່ງເປັນຕົ້ນ: ❶ກອງປະຊຸມສະໄໝສາມັນເທື່ອທີ່ 7 ຂອງສະພາແຫ່ງຊາດຊຸດທີ VIII; ❷ກອງປະຊຸມປຶກສາຫາລືກ່ຽວກັບວຽກງານການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ແລະ ❸ກອງປະຊຸມເຈົ້າໜ້າທີ່ອາວຸໂສດ້ານການເງິນ ACMECS ຄັ້ງທີ 2 ຢູ່ປະເທດກຳປູເຈຍ.
- **ທຫລ** ໄດ້ຈັດກອງປະຊຸມພາຍໃນ ເພື່ອປຶກສາຫາລືທາງດ້ານວິຊາການທີ່ສຳຄັນ ແລະ ວຽກງານປົກອ້ອມຈຳນວນໜຶ່ງເປັນຕົ້ນ: ❶ກອງປະຊຸມສ່ອງແສງສາຍພັກ-ສາຍລັດປະຈຳເດືອນພຶດສະພາ; ❷ກອງປະຊຸມຄົ້ນຄວ້າປັບປຸງແຜນຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາ; ❸ກອງປະຊຸມປຶກສາຫາລືຄົ້ນຄວ້າສ້າງຍຸດທະສາດພັດທະນາໂຮງພິມທະນະບັດ ທຫລ; ❹ກອງປະຊຸມສຳມະນາໃນຫົວຂໍ້: ການຮ່ວມມືກັບບໍລິສັດ UnionPay International (UPI) ກັບ ທຫລ; ❺ກອງປະຊຸມການຄຸ້ມຄອງ ແລະ ການຕິດຕາມກວດກາການຊຳລະ; ❻ກອງປະຊຸມຝຶກອົບຮົມໃນຫົວຂໍ້: "Payment System Governance and Oversight"; ❼ກອງປະຊຸມຝຶກອົບຮົມພາຍໃຕ້ວຽກງານເຊື່ອມໂຍງຂະແໜງການເງິນຂອງອາຊຽນໃນຫົວຂໍ້: "Bank Corporate Governance Information Disclosure and Loan Loss

Provisioning" ແລະ ❽ກອງປະຊຸມຝຶກອົບຮົມຫົວຂໍ້: "ການຄຸ້ມຄອງບໍລິຫານຂອງທະນາຄານທຸລະກິດ, ການເປີດເຜີຍຂໍ້ມູນ ແລະ ການຫັກເງິນແຮ".

- ທຫລ ໄດ້ສຳເລັດວຽກງານວິຊາສະເພາະທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ: ❶ສຳເລັດການຮັບຮອງ ແລະ ອອກລັດຖະດຳລັດປະກາດໃຊ້ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ຈາກຫ້ອງວ່າການປະທານປະເທດ; ❷ອອກຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດນຳເຂົ້າ-ສົ່ງອອກຄຳທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ; ❸ລົງກວດກາທະນາຄານມາເລຍັນມະຫາຊົນ ສາຂາລາວ ປະຈຳປີ 2018 ຫາໄຕມາດ I/2019 ແລະ ❹ລົງກວດກາສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ (ສກຈບ) ປະຈຳປີ 2018 ຈຳນວນ 02 ແຫ່ງ (ສະເຫຼີມສຸກ ແລະ ສິນອຸດົມພັດທະນາ) ພ້ອມທັງ, ຈັດຝຶກອົບຮົມຫຼັກສູດຂອງສະຫະກອນໃຫ້ແກ່ຄະນະຜູ້ບໍລິຫານຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ສສງ) ຈຳນວນ 2 ແຫ່ງ ຄື: ສສງ ກະດັບຮຸ່ງເຮືອງ ແລະ ສສງ ມິດຕະພາບ.
- **ທຫລ ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກຄະນະຜູ້ອຳນວຍການທະນາຄານການລົງທຶນ ແລະ ພັດທະນາຫວຽດນາມ BIDV.**

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ.
- **ທຫລ ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກ ເພື່ອປຶກສາຫາລືວຽກງານທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີປະຈຳເດືອນ ມິຖຸນາ 2019 ແລະ ❷ກອງປະຊຸມສຳມະນາໃນຫົວຂໍ້: "Balancing Fintech Opportunities and Risks-Implementing the Bali Fintech Agenda" ຢູ່ ປະເທດໄທ.
- **ທຫລ ກະກຽມຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆເປັນຕົ້ນ:** ❶ກອງປະຊຸມຄະນະປະຈຳພັກ-ຄະນະຜູ້ວ່າການປະຈຳເດືອນ ມິຖຸນາ ທຫລ; ❷ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບຄັ້ງທີ II ປະຈຳປີ 2019; ❸ກອງປະຊຸມຄົ້ນຄວ້າຮັບຜິດຊອບວຽກກອງທຶນພັດທະນາໄຊສົມບູນ; ❹ກອງປະຊຸມຄົ້ນຄວ້າປັບປຸງທະນາຄານນະໂຍບາຍ; ❺ກອງປະຊຸມຄະນະຄົ້ນຄວ້ານະໂຍບາຍສິນເຊື່ອສົ່ງເສີມ SMEs; ❻ກອງປະຊຸມໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບຕະຫຼາດທຶນໃນຫົວຂໍ້: ການລະດົມທຶນຈາກມວນຊົນຈົດທະບຽນໃນຕະຫຼາດຫຼັກຊັບລາວ; ❼ກອງປະຊຸມຜ່ານຮ່າງແບບຟອມການປະເມີນຜົນກະທົບທາງດ້ານປະລິມານ (QIS) ດ້ວຍວິທີ SA; ❽ຈັດສຳມະນາຮ່ວມກັບທະນາຄານແຫ່ງປະເທດໄທໃນຫົວຂໍ້: "ການແລກປ່ຽນເງິນຕາສອງຝ່າຍ (BSA) ແລະ ການຄຸ້ມຄອງເງິນຕາຕ່າງປະເທດ"; ແລະ ❾ຈັດຝຶກອົບຮົມພາຍໃຕ້ວຽກງານເຊື່ອມໂຍງຂະແໜງການເງິນຂອງອາຊຽນໃນຫົວຂໍ້ "Capital Account Liberalization Supervision and Monitoring Framework".
- **ທຫລ ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ** ❶ຄະນະຜູ້ອຳນວຍການທະນາຄານໄທພານິດ ຈຳກັດມະຫາຊົນສຳນັກງານໃຫຍ່ ແລະ ❷ສະພາທຸລະກິດ ສ. ອາເມລິກາ.

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ